| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດສ້າງຕັ້ງ ໂຮງງານ ແລະ ດໍາເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-MD-5 | 07.11.2017 | ກົມບໍ່ແຮ່ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ເພື່ອຄຸ້ມຄອງວາງມາດຕະຖານ ລວມທັງ ຮັບປະກັນຄຸນະພາບ ການຄຸ້ມຄອງການດໍາເນີນເສີມຄຸນຄ່າ ແລະ ແຍກແຮ່ທາດ ໃຫ້ຖືກຕ້ອງຕາມມາດຕະຖານ<br>ຮັບປະກັນໃຫ້ໄດ້ຜະລິດຕະພັນສຸດທ້າຍທີ່ມີຄຸນະພາບ ແລະ ຮັບປະກັນວ່າ ການດໍາເນີນການດັ່ງກ່າວ ຈະບໍ່ສ້າງຜົນກະທົບ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງໂຮງງານ ແລະ ດໍາເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຊຶ່ງໝາຍເຖິງ ອາຄານທີ່ຮັບໃຊ້ໃນການຂົບ, ການບົດ, ການລ້າງ, ການແຍກ, ການເຜົາ, ການຫລໍ່ຫລອມ ເພື່ອແຍກໂລຫະຕ່າງໆ, ການກັ່ນຕອງ, ການປ່ຽນຮູບ, ການປ່ຽນແປງ ສ່ວນປະກອບທາງດ້ານເຄມີໃນໂລຫະ ຫລື ອະໂລຫະ ແລະ ການເຈຍລະໄນ, ບໍ່ວ່າ ບຸກຄົນ ຫລື ນິຕິບຸກຄົນດັ່ງກ່າວ ຈະມີເຂດສໍາປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ ຫລືບໍ່ກໍ່ຕາມ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ ໃນ ການອອກໃບອະນຸຍາດ** | 30 | |
| **ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ** | 1. ກໍລະນີຜູ້ຮ້ອງຂໍມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ ແມ່ນຕ້ອງສະໜອງເອກະສານຢັ້ງຢືນສິດໃນການຂຸດຄົ້ນບໍ່ແຮ່ຂອງຕົນ, ສ້າງແຜນການເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ມີກຳມະວິທີ ສອດຄ່ອງກັບທີ່ກຳນົດໄວ້ ສຳລັບແຕ່ລະປະເພດແຮ່ທາດ; 2. ກໍລະນີຜູ້ຮ້ອງຂໍ ບໍ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ ແມ່ນຕ້ອງມີຖານະການເງິນ ແລະ ປະສົບການໃນການດຳເນີນກິດຈະການອຸດສາຫະກຳດັ່ງກ່າວ ແລະ ຕ້ອງໄດ້ສະໜອງ ສັນຍາຊື້-ຂາຍແຮ່ທາດ ຫລື ສັນຍາຮັບຈ້າງເສີມຄຸນຄ່າ ຫລື ແຍກແຮ່ທາດ ທີ່ຕົນໄດ້ລົງນາມ ກ່ຽວກັບ ການຊື້-ຂາຍແຮ່ທາດດັ່ງກ່າວ ແລະ ໃນການດຳເນີນກຳມະວິທີການເສີມຄຸນຄ່າ, ຜູ້ຮ້ອງຂໍຕ້ອງປະຕິບັດຕາມທີ່ກົດໝາຍກຳນົດໄວ້ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍ ໃບອະນຸຍາດ?** | ປະຕິເສດໃນກໍລະນີຜູ້ຮ້ອງຂໍບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂ ແລະ ຄຸນສົມບັດທີ່ກຳນົດໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກຳນົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 60 |
| **ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບ ອະນຸຍາດ** | ການອອກໃບອະນຸຍາດແຕ່ລະຄັ້ງ ຈະບໍ່ເກີນ 5 ປີ ແລະ ຈະອອກໃຫ້ຈົບຄົບຕາມກຳນົດເວລາ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໂດຍລັດຖະບານ ຊຶ່ງສູງສຸດບໍ່ໃຫ້ເກີນ 20 ປີ ແລະ ສາມາດຕໍ່ໄດ້ ຊຶ່ງລັດຖະບານເປັນຜູ້ພິຈາລະນາຕາມແຕ່ລະກໍລະນີ ໂດຍອີງຕາມຂະໜາດຂອງໂຮງງານ |

| ຄ່າທຳນຽມ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມຄຳ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 300000.00 | 0.00 | 300000.00 |
| **ຄຳເຫັນ** | ອີງຕາມ: ລັດຖະດຳລັດປະທານປະເທດ ເລກທີ 03/ປທ<br>ຖ້າມີການອອກໃບອະນຸຍາດຂຸດຄົ້ນແຮ່ທາດ, ຈະບໍ່ມີການເກັບຄ່າທຳນຽມສຳລັບ ໃບອະນຸຍາດນີ້ | | | |

| ຄ່າທໍານຽມ | |
|---|---|
| | ຕ່າງຫາກອີກ |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 300000.00 | 0.00 | 300000.00 |
| **ຄໍາເຫັນ** | ອີງຕາມ: ລັດຖະດໍາລັດປະທານປະເທດ ເລກທີ 03/ປທ ຖ້າມີການອອກໃບອະນຸຍາດຂຸດຄົ້ນແຮ່ທາດ, ຈະບໍ່ມີການເກັບຄ່າທໍານຽມສໍາລັບ ໃບອະນຸຍາດນີ້ ຕ່າງຫາກອີກ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 02/ສພຊ | 26.12.2011 | ພາກທີ III ກິດຈະການກ່ຽວກັບແຮ່ທາດ (ມາດຕາ 19 ແລະ ມາດຕາ 24) |
| ລະບຽບການວ່າດ້ວຍ ການຄຸ້ມຄອງໂຮງງານອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ | 0760/ພບ | 28.05.2015 | ໝວດທີ III ການອະນຸຍາດສ້າງຕັ້ງໂຮງງານ ແລະ ດໍາເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ (ມາດຕາ 7 ແລະ ມາດຕາ 10) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ສັນຍາຊື້-ຂາຍແຮ່ທາດ |
| ໃບສະແດງປະສົບການໃນການດໍາເນີນກິດຈະການອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ |
| ແຜນການເສີມຄຸນຄ່າ ແລະ ແຍກແຮ່ທາດ |
| ບົດວິພາກເສດຖະກິດເຕັກນິກ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ແຜນຜັງການກໍ່ສ້າງ |

| ເອກະສານປະກອບ |
| --- |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ |
| ໃບອະນຸຍາດປຸກສ້າງ |
| ໃບອະນຸຍາດລົງທຶນ ສຳລັບ ທຸລະກິດສຳປະທານ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |